# ຄູ່ມືຜູ້ນຳ ຫຼັກສູດ ສ.ອ.ນ. ມັດທາຍເຫຼັ້ມທີ 5

## ຄຳນຳ

ການປະຊຸມທຸກໆ ເທື່ອຈະປະກອບດ້ວຍ 4 ພາກສ່ວນດັ່ງຕໍ່ໄປນີ້:

1. ການນະມັດສະການ: (10 ນາທີ)

   ໃຫ້ເລີ້ມຕົ້ນທຸກໆ ປະຊຸມດ້ວຍການນະມັດສະການອັນທີ່ປະກອບດ້ວຍຮ້ອງເພງ, ການເລົ່າຄຳພະຍານ, ສະເໜີບັນຫາກ່ຽວກັບບຸກຄົນໃດຄົນໜຶ່ງຫຼືກ່ຽວກັບພວກຄຼິດສະຕຽນທີ່ບ້ານໃຜບ້ານລາວກໍໄດ້ແລ້ວຕອນສຸດທ້າຍຮ່ວມອ້ອນວອນເພື່ອກັນແລະກັນ ແລະເພື່ອຄຼິດສະຕຽນທັງປວງ.

2. ຄຳອະທິບາຍແລ້ວຮຽນຄືນ: (20 ນາທີ)

   ກ. ການເສັງໃນປະຊຸມ: ໃຫ້ທ່ານຕຽມຄຳຖາມຈັກ10 ປະການທີ່ທ່ານຍົກມາຈາກບົດສອນໃນແຕ່ລະໝວດ. ເສັງໃນປະຊຸມນີ້ ເສັງດ້ວຍປາກເປົ່າກໍໄດ້, ເສັງດ້ວຍຂຽນກໍໄດ້ແລ້ວແຕ່ທ່ານເຫັນດີ. ໃຫ້ທ່ານຈັດການເສັງນີ້ໄວ້ກ່ອນສິ່ງອື່ນໆເພື່ອທ່ານຈະສັງເກດສ່ວນອ່ອນແອຂອງຜູ້ມາຮຽນ. ດັ່ງນັ້ນທ່ານຈະສາມາດເນັ້ນໜັກສອນສ່ວນອ່ອນແອນັ້ນ.

   ຂ. ກວດການບ້ານ: ໃຫ້ທ່ານກວດເບິ່ງວ່າເຂົາໄດ້ຕອບຄຳຖາມໝົດບໍ່? ບົດຝຶກຫັດເດໄດ້ເຮັດໃສ່ພະຄຳພີຕາມທີ່ບອກໝົດທຸກຄົນແລ້ວບໍ່?

   ຄ. ໃຫ້ທ່ານເປີດໂອກາດເພື່ອເຂົາຈະສະເໜີບັນຫາ ຫຼືຄຳຖາມທີ່ເຂົາມີມາ.

   ງ. ກວດບົດເສັງໃນຫຼັກສູດສອນ:ທ່ານອ່ານຄຳຕອບຂອງບົດເສັງໃນສຸດທ້າຍຂອງຄູ່ມືນີ້ ໃຫ້ເຂົາກວດຄຳຕອບຂອງໃຜຂອງລາວ. ຖ້າທ່ານສັງເກດເຫັນວ່າມີດ້ານໃດທີ່ອ່ອນແອທ່ານຕ້ອງສອນຊ້ຳເລື່ອງນັ້ນອີກ.

   ຈ. ການແຈ້ງຊື່ໃນບັນທຶກ: ຢ່າລືມ! ຕ້ອງເຮັດທຸກເທື່ອ.

3. ການປຶກສາຫາລືແລະນຳບົດຮຽນມາໃຊ້: (1 ຊົ່ວໂມງ)

   ກ. ຄຳຖາມແລະຈຸດສຳຄັນ: ໃຫ້ທ່ານເອງຕຽມໂຄງຮ່າງບອກທາງກ່ອນຈະມາຮ່ວມປະຊຸມໃນແຕ່ລະໝວດ. ຄູ່ມືນີ້ມີຂໍ້ສະເໜີເພື່ອແຕ່ລະໝວດ ແຕ່ຂໍ້ສະເໜີເຫຼົ່ານີ້ບໍ່ຕາຍຕົວ. ເຖິງວ່າທ່ານຈະຕຽມໂຄງຮ່າງໃດກໍຕາມແຕ່ຢ່າໜີຈາກເປົ້າໝາຍນີ້ໄປເນີ! ທ່ານຈິ່ງຈັດໃຫ້ການນະມັດສະການເຂົ້າກັບບົດສອນອີກດ້ວຍແຕ່ຈົ່ງຕຽມຕົວດີໆ ກ່ອນປະຊຸມ.

   ຂ. ການປະຕິບັດ: ທ່ານອາດຈະສາມາດໃຊ້ວຽກລິງໄປປະຕິບັດຕົວຈິງໃຫ້ເຂົາເຮັດຕາມພອນສະຫວັນຂອງໃຜລາວແຕ່ໃຫ້ວຽກນັ້ນຖືກກັບບົດຮຽນໃນປະຊຸມອາທິດໜ້ານັ້ນ. ຜູ້ມາຮຽນທຸກຄົນສົມຄວນຈະຮັບພາລະຢ່າງໜຶ່ງຢ່າງໃດໃນຄຼິດສະຕະຈັກຂອງເຂົາ.

4. ປິດປະຊຸມສອນ: (5 ນາທີ)

   ໃຫ້ທ່ານແຕ່ງຕັ້ງວຽກການບ້ານດີໆ ແລະໃຫ້ອ່ານເປົ້າໝາຍໃນໝວດຕໍ່ໄປເພື່ອອາທິດໜ້າ. ຈຸດໃດໃນບົດຮຽນທີ່ອາດຈະຍາກໂພດໃຫ້ທ່ານພະຍາຍາມອະທິບາຍກ່ອນ.

ສຸດທ້າຍໃຫ້ປິດປະຊຸມດ້ວຍການອ້ອນວອນ.

# ການປະຊຸມເທື່ອທີ 1

<u>ຈົ່ງຕຽມຕົວກ່ອນປະຊຸມ:</u> ໃຫ້ຜູ້ນຳຕັດເຈ້ຍ 8 ໃບ ໃຫ້ຂຽນວັນຕ່າງໆ ໃນອາທິດສຸດທ້າຍ

(ແຕ່ວັນອາທິດເຖິງວັນອາທິດ ລວມ 8 ວັນ) ຂ້າງໜ້າແລ້ວໃຫ້ຂຽນເຫດການທີ່ເກີດໃນວັນນັ້ນໃສ່ໄວ້ຂ້າງຫຼັງ. ໃບທຳອິດເລີ້ມຕົ້ນກັບ "ວັນອາທິດ" ຂ້າງໜ້າແລະຂ້າງຫຼັງໃຫ້ຂຽນ "ພະອົງເຂົ້າກຸງຢ່າງຜູ້ມີໄຊ" ຈົບລົງກັບວັນອາທິດທີ່ພະອົງຄືນຈາກຕາຍ.

<u>ໃນການປະຊຸມ</u>

1. ໃຫ້ກວດບົດເສັງ 1 ແລະ 2 ກວດເບິ່ງອີກວ່າເຂົາຕອບຄຳຖາມທັງໝົດບໍ່? ເຂົາເຮັດການຝຶກຂີດເສັ້ນກ້ອງຄຳໃນພະຄຳພີບໍ່?
2. ໃຫ້ເອົາແຜ່ນເຈ້ຍ 8 ໃບທີ່ທ່ານຕຽມມາກ່ອນ. ໃຫ້ເຂົາກ່າວເລື່ອງແຕ່ລະປະການໃນແຜ່ນນັ້ນ ໃຫ້ເຂົາຈັດແຕ່ລະໃບວາງເທິງ ໂຕະຕາມລຳດັບເຫດການ. ໃຫ້ເປີດພະຄຳພີທີ່ກ່າວເລື່ອງແຕ່ລະປະການເພື່ອສັງເກດຮູ້ລາຍລະອຽດຕ່າງໆ ໃນເຫດການເຫຼົ່ານັ້ນ.
3. ຖາມເຂົາວ່າ ອັບລາຮາມມີປະສົບປະການ 2 ປະການໃດໃນບ່ອນທີ່ຈະກາຍເປັນພະວິຫານ. ສອງເລື່ອງນັ້ນບັນທຶກໃນພະທຳ ໃດແລະເປັນດ້ວຍເຫດໃດທີ່ເຫດການສອງປະການນັ້ນເປັນສິ່ງທີ່ສຳຄັນ.
4. ໃຫ້ເຂົາກ່າວເລື່ອງສອງປະການນັ້ນ ແລະອະທິບາຍວ່າເຫດການເຫຼົ່ານັ້ນສະແດງເປັນເຄື່ອງໝາຍເຖິງຄວາມຕາຍຂອງພະເຢ ຊູຢ່າງໃດ?
5. ໃຫ້ທ່ານແນ່ໃຈວ່າ ເຂົາຮູ້ເລື່ອງສະຖານທີ່ພະວິຫານໃນ 6 ໄລຍະ ຕາມໃນຕາຕະລາງ "ເຂດເຢລູຊາເລັມ ແລະພະວິຫານ" ຫຼັງຈາກຄຳຖາມ 1.4
6. ໃຫ້ຜູ້ນຳແຕ້ມແຜນຜັງພະວິຫານຕາມແບບໃນຄຳຖາມ 1.14 ແຕ່ຢ່າຟ້າວບອກສະຖານທີ່ຕ່າງ ໆ. ແລ້ວໃຫ້ເຂົາຊີ້ບອກ ສະຖານທີ່ ແລະເຄື່ອງໃຊ້ດັ່ງຕໍ່ໄປນີ້:

| | |
|---|---|
| ຫ້ອງສັກສິດທີ່ສຸດ | ຫ້ອງສັກສິດ |
| ຫີບຄຳສັນຍາ | ແທ່ນບູຊາເຄື່ອງຫອມ |
| ເດີ່ນ | ໂຕະເຂົ້າຈີ່ |
| ຊາມ | ເຄື່ອງຮອງຕີນໂຄມ |
| ແທ່ນບູຊາເຜົາ | |

ຕໍ່ໄປໃຫ້ເຂົາອະທິບາຍຈຸດປະສົງແຕ່ລະປະການ ແລະບອກອີກວ່າແຕ່ລະສະຖານທີ່ນັ້ນປຽບທຽບຫຍັງໃນການໃຫ້ລອດພົ້ນຈາກພະເຈົ້າ.

7. ໃຫ້ເຂົາປຶກສາຫາລືກັນກ່ຽວກັບ ທີ່ພວກເຮົາໄວ້ວາງໃຈໃນພະເຢຊູກາຍເປັນພະວິຫານຂອງພະເຈົ້າໃນຍຸກນີ້ ຕາມຂໍ້ພະຄຳພີດັ່ງຕໍ່ໄປນີ້:

| | |
|---|---|
| 1 ໂກລິນໂທ 3:16-17 | ກິດຈະການ 17:24 |
| 1 ໂກລິນໂທ 6:19 | ເອເຟໂຊ 2:22 |
| 2 ໂກລິນໂທ 6:16 | ມັດທາຍ 18:20 |
| 1 ເປໂຕ 2:5 | |

8. ໃຫ້ຮຽນຄືນໂດຍປາກເປົ່າໃນເລື້ອງຄຳຖາມ 2.71

9. ໃຫ້ປຶກສາຫາລືກ່ຽວກັບຄວາມສຳພັນລະຫວ່າງເທດສະການປັດສະຄາແລະພິທີສິນມະຫາສະນິດ.

---

# ການປະຊຸມເທື່ອທີ 2

<u>ໃນການປະຊຸມ</u>

1. ໃຫ້ກວດບົດເສັງ 3, 4 ແລະ 5 ທັງບົດຝຶກດ້ວຍ.

2. ຖາມເຂົາວ່າ ແມ່ນຜູ້ປະກາດພະທຳຄົນໃດໃນພະຄຳພີເດີມທີ່ທຳນວາຍເລື່ອງການຊົງເຂົ້າກຸງຢ່າງຜູ້ມີໄຊ. ອີກ ຜູ້ໃດທຳນ ວາຍເລື່ອງທີ່ພະເຢຊູຈະມາປົກຄອງສືບຕໍ່ກະສັດດາວິດ. ໃຫ້ເຂົາອະທິບາຍວ່າຄຳທຳນວາຍທັງສອງສຳເລັດໃນວັນທີ່ພະເຢຊູເຂົ້າກຸງຢ່າງຜູ້ມີໄຊ.

3. ໃຫ້ເຂົາປຶກສາຫາລືກັນກ່ຽວກັບສັນຍາລັກຕ່າງໆ ໃນເມື່ອພະອົງເຂົ້າກຸງຢ່າງຜູ້ມີໄຊ.

4. ໃນອາທິດສຸດທ້າຍພະເຢຊູຮັບໃຊ້ພະບິດາ ໃນ 3 ດ້ານຄື: ຜູ້ປະກາດ, ປະໂລຫິດ ແລະກະສັດ. ໃຫ້ຄົນໜຶ່ງບັນລະຍາຍເລື່ອງ ທີ່ພະເຢຊູຮັບໃຊ້ເປັນຜູ້ປະກາດຢ່າງໃດ ແລະບອກບົດຂໍ້ໃນພະຄຳພີເດີມທີ່ທຳນວາຍເລື່ອງນັ້ນທັງຍົກບົດແລະຂໍ້ໃນພະຄຳພີໃໝ່ທີ່ຄຳທຳນວາຍນັ້ນສຳເລັດ.
   ໃຫ້ເຮັດຢ່າງດຽວກັນກັບການຮັບໃຊ້ດ້ານປະໂລຫິດແລະກະສັດ..

5. ເຂົາຈະຕອບຄົນທີ່ບໍ່ເຊື່ອວ່າພະເຢຊູເປັນພະຜູ້ເປັນເຈົ້າຢ່າງໃດ? ຖາມເຂົາວ່າ ແມ່ນເພາະເຫດໃດທີ່ຄຣິດສະຕຽນເຮົາມີສິດ ອະທິຖານຕໍ່ພະອົງໂດຍກົງ ບໍ່ຕ້ອງມີຜູ້ກາງ.

6. ໃຫ້ປຶກສາຫາລືກັນກ່ຽວກັບຕົ້ນເດື່ອເທດທີ່ບໍ່ມີໝາກ ແລະຍົກມາປຽບທຽບກັບຄຣິດສະຕະຈັກທີ່ມີປະຊຸມຫຼາຍ ມີກຳມະການ ຫຼາຍແຕ່ບໍ່ມີຜົນ. (ຕົວຢ່າງມີໃບໄມ້ແຕ່ບໍ່ມີໝາກ)

7. ໃຫ້ເຂົາຍົກຕົວຢ່າງທີ່ສະແດງເຖິງຜົນໃນຊີວິດຄຣິດສະຕຽນແລ້ວໃຫ້ບາງຄົນກ່າວຄຳພະຍານໃນເລື່ອງນີ້.

8. ໃຫ້ເຂົາປຶກສາຫາລືກັນເລື່ອງທີ່ພະເຢຊູເທດສະໜາຢູ່ພູໝາກກອກເທດ. ຄຳສັນຍາຂອງພະເຢຊູຕໍ່ຊາດຢິວສຳເລັດມາເຖິງ ຂະໜາດໃດ?

9. ໃຫ້ເຂົາປຶກສາຫາລືກັນກ່ຽວກັບແຖວ “ຫຼັກຄຳສອນ” ໃນໜ້າ 51. (ຫຼັງຄຳຖາມ 4.36)

# ການປະຊຸມເທື່ອທີ 3

<u>ໃນການປະຊຸມ</u>

1. ໃຫ້ກວດຄຳຕອບໃນບົດເສັງທີ 6 ແລະ 7 ທັງບົດຝຶກອີກດ້ວຍ.
2. ໃຫ້ທ່ານແຈກເຈ້ຍໃບນ້ອຍໆໃຫ້ເຂົາແຕ່ລະຄົນແລ້ວໃຫ້ເຂົາຂຽນທັງພະບັນຍັດຂໍ້ໃຫຍ່ແລະພະບັນຍັດທີສອງ ດ້ວຍບໍ່ເປີດເບິ່ງ! ຖ້າຄົນໃດຈະດຳເນີນຊີວິດໃຫ້ຖືກກັບພະບັນຍັດທັງສອງນັ້ນ ຈະປາກົດອອກໃນຊີວິດຢ່າງໃດ?
3. ໃຫ້ເຂົາບັນລະຍາຍສະພາບຂອງມະນຸດກ່ອນບໍ່ໄດ້ຕົກໃນບາບເທື່ອແລະຫຼັງຈາກຕົກບາບຈະຕ່າງກັນຢ່າງໃດ? ໃຫ້ເຂົາອະທິບາຍວ່າ ຈິດໃຈ, ຄວາມຄິດ ແລະ ກຳລັງ ຈະແຕກຕ່າງກັນຢ່າງໃດ? ຖ້າຄົນໃດຈະມອບຈິດໃຈໄວ້ກັບພະເຈົ້າແຕ່ບໍ່ມອບຄວາມຄິດໄວ້ຈະເປັນຢ່າງໃດ? ຖ້າມອບຄວາມຄິດແຕ່ບໍ່ມອບກຳລັງຈະເປັນຢ່າງໃດ? ໃຫ້ເຂົາຍົກຂໍ້ພະຄຳພີບາງຂໍ້ທີ່ກ່ຽວຂ້ອງກັບມະນຸດເປັນຄົນບາບ. ເຂົາຄວນເຮັດຢ່າງໃດຈຶ່ງຈະມອບຕົວໄວ້ໃຫ້ ພະເຈົ້າທັງສິ້ນ.
4. ຊີວິດຂອງພະເຢຊູສະແດງຄວາມຮັກຕໍ່ພະບິດາຢ່າງຄົບຖ້ວນ. ໃຫ້ເຂົາປຶກສາຫາລືກັນໃນຄຳຖາມ 6.32 ແລະ 33.
5. ຖາມເຂົາວ່າເຄີຍເຫັນຄົນທີ່ເຂົ້າມາເປັນຄຼິດສະຕຽນເຂົາອາດຈະຮັບບັບຕິສະມາແຕ່ຕໍ່ໄປບໍ່ສົນໃຈໃນພະຄຳພີ ແລະບໍ່ມາ ຮ່ວມນະມັດສະການອີກບໍ່? ອາດຈະແມ່ນແຕ່ເຂົາມອບຈິດໃຈ ແຕ່ບໍ່ມອບຄວາມຄິດໄວ້ໃຫ້ພະເຈົ້າຫຼື ເຂົາອາດຈະມອບກຳລັງແຕ່ບໍ່ມອບຈິດໃຈກໍມີ. ການມອບຕົວໃຫ້ຮັກພະເຈົ້າບໍ່ເຕັມສ່ວນຈະມີຜົນຮັບຢ່າງໃດ? ແລະອີກສ່ວນຜູ້ປະກາດຂ່າວປະເສີດໃຫ້ຄົນນອກນັ້ນ ເຂົາອາດຈະຊັກຊວນໃຫ້ຄວາມຄິດຂອງເຂົາຮັບຮູ້ຄວາມຈິງໃນພະຄຳພີແຕ່ບໍ່ຈັບໃຈເຂົາຫຼືອາດຈະກົງ ກັນຂ້າມທີ່ເຂົາດຶງດູດຈິດໃຈ ແຕ່ບໍ່ເຊື່ອໃນດ້ານຄວາມຄິດ. ຈະປຶກສາເຂົາຢ່າງໄດ້ໃດ?
6. ຖ້າຜູ້ປ່າວປະກາດຈະຍົກຄຳພະຍານທີ່ຖືກໃຈເຂົາແທ້ໆ ແຕ່ບໍ່ຍົກສອນຫຼັກຄວາມເຊື່ອຈາກພະຄຳພີຈະຂາດໃນດ້ານໃດ? ຖ້າເຮົາຈະພິສູດຕາຍຕົວວ່າ ພະເຢຊູຕາຍແທນບາບເຮົາ ຊົງຄືນມາຈາກຕາຍຢ່າງແນ່ນອນແຕ່ເຂົາບໍ່ເຫັນສ່ວນທີ່ກ່ຽວເລື່ອງໃນຊີວິດຂອງເຂົາຈະເໝາະສົມບໍ່. ຖ້າເຮົາຈະລ້ຽງຄຼິດສະຕຽນໃໝ່ໃຫ້ເຕີບໂຕຝ່າຍວິນຍານເຮົາຄວນສອນເຂົາ ອົບຮົມເຂົາ ແລະເປີດໂອກາດໃຫ້ເຂົາຮັບໃຊ້ຢ່າງໃດ?
7. ໃຫ້ເຂົາບັນລະຍາຍຄວາມຄິດຂອງຄົນທີ່ບໍ່ໄວ້ວາງໃຈໃນພະເຢຊູ (2 ກລທ 3:14-16 2 ກລທ 4:4 ເອເຟໂຊ 4:17-18 ແລະ 1 ກລທ 2:14). ແມ່ນໃຜຄຸ້ມຄອງຄວາມຄິດຂອງເຂົາ? ມານຕົວະເຂົາຢ່າງໃດກ່ຽວກັບຄວາມຈິງເລື່ອງພະເຢຊູ?
8. ເມື່ອພະເຢຊູໂຕ້ຖຽງກັນໃນພະວິຫານວັນອັງຄານນັ້ນ ພະອົງໂຕ້ຖຽງກັບໃຜ? ພະອົງໃຊ້ ຈິດໃຈ ຄວາມຄິດຫຼື ກຳລັງ? ເປັນຫຍັງພວກຟາລີຊາຍແລະຊາດູກາຍຖາມພະເຢຊູຢ່າງນັ້ນ? ໃຫ້ເຂົາຕອບຄຳຖາມຂອງພະເຢຊູ ໃນ ມທ 22:45.

9. ໃຫ້ເຂົາປຶກສາຫາລືກັນວ່າ ຈະເປັນຢ່າງໃດເພື່ອປ້ອງກັນບໍ່ໃຫ້ພະຍາມານປົກຄອງຄວາມຄິດຂອງເຮົາ. (ໂລມ 12:2 ເອເຟໂຊ 4:23 2 ກລທ 10:5 ແລະ ຟີລິບປອຍ 4:7-9) ໃຫ້ເຂົາສະເໜີຄວາມຄິດເຫັນເລື່ອງໃນບົດຝຶກຢູ່ທ້າຍສຸດຂອງ ບົດທີ 7 ແລ້ວຍົກມາປຶກສາຫາລືກັນ. ໃຫ້ເຂົາອ້ອນວອນໂດຍບໍ່ອອກສຽງຂໍໃຫ້ພະເຈົ້າຊີ້ບອກສິ່ງໃນຄວາມຄິດຂອງເຂົາທີ່ບໍ່ຖະຫວາຍກຽດແກ່ພະເຈົ້າ. ຈົ່ງສາລະພາບຜິດນັ້ນຕໍ່ພະເຈົ້າແລ້ວຂໍອຳນາດຈາກພະເຈົ້າໃນການຊຳລະໃຫ້ມີຄວາມຄິດທີ່ຖືກກັບນ້ຳພະໄທ.

---

# ການປະຊຸມເທື່ອທີ 4

<u>ໃນການປະຊຸມ</u>

1. ໃຫ້ກວດຄຳຕອບໃນບົດເສັງ 8, 9 ແລະ 10 ທັງບົດຝຶກອີກຕາມເຄີຍ.
2. ມີບາງຄົນທີ່ມັກສະແດງຕົວວ່າເປັນຄົນຊອບທຳ. ໃນມັດທາຍ 23:5-7 ພວກຟາລິຊາຍແລະຊາດູກາຍແກ້ງເຮັດວ່າຕົນ ຊອບທຳຫຼາຍໂດຍເຮັດຫຍັງ? ເປັນການຈິງໃຈບໍ່? ເຂົາເຄີຍເຫັນຄົນທີ່ມັກສະແດງຕົວວ່າເປັນຄຼິດສະຕຽນ ທີ່ດີຢ່າງໃດ? ເປັນການຈິງໃຈບໍ່? ຖ້າເຮົາສັງເກດຕົນເອງວ່າເຮົາເຮັດສິ່ງໜຶ່ງສິ່ງໃດເພື່ອແຕ່ໃຫ້ຄົນອື່ນເຫັນຄວນເຮັດຢ່າງໃດ?
3. ໃຫ້ເຂົາເປີດພະຄຳພີ ແລ້ວຍົກຄວາມຜິດຂອງພວກຟາລິຊາຍ 7 ປະການຈາກ ມັດທາຍ 23:1-36. ເຂົາມັກອຳ ຄວາມຜິດ ນັ້ນໄວ້ຈາກຕາຂອງຜູ້ອື່ນໂດຍວິທີໃດ? ໃນມັດທາຍ 23:29-36 ເຂົາຍົບຍອມຜູ້ທີ່ຂົ່ມເຫງຜູ້ປະກາດພະທຳໃນສະໄໝພະຄຳພີເດີມບໍ່? ໃນມັດທາຍ 23:32 ເຂົາຈວນຈະເຮັດຕາມແບບຄົນຂົ່ມເຫງຜູ້ປະກາດພະທຳໃນພະຄຳພີເດີມນັ້ນຢ່າງໃດ?
4. ໃຫ້ເຂົາຍົກຕົວຢ່າງທ່າທີຕ່າງໆທີ່ຂຶ້ນຢູ່ກັບຈິດໃຈ. ໃຫ້ຍົກຕົວຢ່າງຈາກພະຄຳພີແລະຈາກຊີວິດປະຈຳວັນອີກດ້ວຍ.
5. ໃຫ້ເຂົາຍົກຕົວຢ່າງຈາກຊີວິດຂອງເຂົາທີ່ສະແດງຄວາມຮັກແລະທີ່ສະແດງຄວາມກຽດຊັງ. ທ່າທີໃດເຫຼົ່ານັ້ນທີ່ຢູໃຕ້ການປົກ ຄອງຂອງພະເຈົ້າ ແລະທ່າທີໃດຂຶ້ນຢູ່ກັບພະຍາມານ? ຖ້າພະຍາມານມາທົດລອງໃຫ້ເຮົາມີທ່າທີບໍ່ດີເຮົາຈະເຮັດຢ່າງໃດຈິ່ງຈະມີທ່າທີທີ່ຖືກກັບນ້ຳພະໄທຂອງພະເຈົ້າໄດ້?
6. ຖາມເຂົາວ່າ ທ່າທີທີ່ພະເຈົ້າປົກຄອງແຕກຕ່າງກັນກັບທ່າທີທີ່ພະຍາມານປົກຄອງຢ່າງໃດ? ເປັນຫຍັງທ່າທີທີ່ພະຍາມານ ປົກຄອງປ່ຽນແປງຢູ່ສະເໝີ ແຕ່ທ່າທີທີ່ພະເຈົ້າປົກຄອງບໍ່ມີການປ່ຽນແປງ.
7. ໃຫ້ເຂົາອ່ານ 2 ໂກລິນໂທ 5:7 ແລ້ວອະທິບາຍວ່າການດຳເນີນຊີວິດຕາມຄວາມເຊື່ອແລະການດຳເນີນຊີວິດຕາມທີ່ຕາເຫັນ ຈະຕ່າງກັນໄປຢ່າງໃດ? (ໃຫ້ອ່ານ IIໂກລິນໂທ 4:16-18).
8. ຖ້າເຫັນຄົນໃດທີ່ເສົ້າໃຈຢູ່ສະເໝີຈະອົບຮົມຜູ້ນັ້ນຢ່າງໃດ? ຄົນທີ່ໃຈຮ້າຍງ່າຍເກີນໄປເດ?
9. ຖ້າຄົນໃດເຄີຍມີປະສົບປະການໃນການອົບຮົມຄົນທີ່ມັກໃຈຮ້າຍ ໃຫ້ເຂົາເລົ່າໃຫ້ໝູ່ຟັງ. ແທນທີ່ຈະໃຈຮ້າຍຄວນເຮັດຢ່າງ ໃດ? ຈະສະແດງຄວາມຮັກຂອງພະເຈົ້າຕໍ່ຄົນທີ່ຜິດໃຈກັບເຮົາຢ່າງໃດ?

# ການປະຊຸມເທື່ອທີ 5

ໃນການປະຊຸມ

1. ໃຫ້ກວດຄຳຕອບໃນບົດເສັງ 11, 12 ແລະ 13 ທັງບົດຝຶກດ້ວຍ.
2. ໃນຄຳເທດສະໜາຢູ່ພູໝາກກອກເທດພະເຢຊູຕອບຄຳຖາມ 3 ປະການ (ເບິ່ງ 11.3). ຈົ່ງຖາມເຂົາ ວ່າແມ່ນຜູ້ໃດຖາມ ພະອົງຢ່າງນັ້ນ? ພະເຢຊູຕອບເຂົາຢ່າງໃດ? ພະເຢຊູຍົກຄຳອຸປະມາ 3 ເລື່ອງໃດ ທີ່ຕອບບັນຫາ ເຫຼົ່ານັ້ນ.
3. ມທ 24:3-28 ບອກເລື່ອງໝາຍສຳຄັນກ່ອນສິ້ນສຸດໂລກ 8 ປະການ. ໃຫ້ເຂົາເປີດພະຄຳພີມາສະເໜີ ທັງ 8 ປະການນັ້ນ ແລ້ວແຍກມາເປັນ 3 ດ້ານຄື: (1) ດ້ານສັງຄົມແລະການເມືອງ (2) ດ້ານທຳມະ ຊາດແລະ ແວດລ້ອມ (3) ດ້ານສາດສະໜາ. ໃຫ້ເຂົາຍົກເຫດການຕ່າງໆ ໃນຂ່າວໂລກປະຈຸບັນມາ ປຽບທຽບກັບຄຳທຳ ນວາຍຂອງພະເຢຊູ. ຖ້າເຫັນວ່າໂລກນີ້ຈວນຈະສິ້ນສຸດແລ້ວ ເຮົາຄວນຈະດຳ ເນີນຊີວິດໄປຢ່າງໃດ?
4. ໃນ ມທ 24:2 ແລະ 15 ພະເຢຊູ ບອກເລື່ອງໝາຍສຳຄັນສອງປະການໃດ?
5. ໃຫ້ເຂົາຝຶກອະທິບາຍເລື່ອງຄຳທຳນວາຍທີ່ສຳເລັດບາງປະການໃນເວລາໃກ້ຈະສຳເລັດຢ່າງສົມບູນ ໃນອະນາຄົດໃຫ້ເຂົາຍົກ ຕົວຢ່າງຈາກຮູບສາຍພູເຂົາມາອະທິບາຍ.
6. ໃຫ້ເຂົາບອກໝາຍສຳຄັນ 3 ປະການໃນທ້ອງຟ້າທີ່ຈະເກີດມີມາກ່ອນພະເຢຊູຈະສະເດັດມາອີກ (12.6). ຖ້າມີຄົນມາຖາມວ່າ "ພະອົງຈະກັບມາເມື່ອໃດ" ເຂົາຈະຕອບຢ່າງໃດ? ໃຫ້ເຂົາອະທິບາຍ ການສະເດັດມາເທື່ອທີສອງໃຫ້ຖືກກັບມັດທາຍບົດ 24.
7. ໃຫ້ເຂົາແລກປ່ຽນຄວາມຄິດເຫັນກັນກັບໝູ່ໃນເລື່ອງ 12.17 ແລະ 12.19.
8. ໃຫ້ທ່ານແນໃສ່ທີ່ເຂົາເຂົ້າໃຈດີກ່ຽວກັບຄວາມເຫັນຈາກ 3 ແງ່ໃນເລື່ອງພັນປີ.
9. ໃຫ້ເຂົາແລກປ່ຽນຄວາມຄິດເຫັນຈາກ 13.30
10. ໃຫ້ເຂົາປຶກສາຫາລືກັນກ່ຽວກັບຕົວອັກສອນເນີ້ງຢູ່ທ້າຍສຸດຂອງບົດທີ 13 ໜ້າ 148.

---

# ການປະຊຸມເທື່ອທີ 6

ໃນການປະຊຸມ

1. ໃຫ້ກວດຄຳຕອບໃນບົດເສັງ 14 ແລະ 15
2. ໃຫ້ຖາມບົດແລະຂໍ້ທີ່ບອກຄຳອຸປະມາເລື່ອງເງິນຕາລັນຕົນ. ພະເຢຊູຍົກຄຳອຸປະມານັ້ນເພື່ອຈະຕອບ ຄຳຖາມໃດ? ນາຍປຽບເຖິງໃຜ? ຄົນໃຊ້ທີ່ສັດຊື່ປຽບເຖິງໃຜ? ຄົນໃຊ້ທີສາມເດ? ໃຫ້ເຂົາບອກເນື້ອ ຄວາມໃນຄຳອຸປະມານັ້ນ.

3. ໃຫ້ເຂົາແລກປ່ຽນຄວາມຄິດເຫັນຈາກຕົວອັກສອນເນີ້ງ ຫຼັງຈາກຄຳຖາມ 14.24. ຄືຄວາມສາມາດແລະພອນສະຫັວນທີ່ ເຂົາມີຢູ່ມາຈາກໃສ? ສົມຄວນທີ່ຈະໃຊ້ຢ່າງໃດ? ໃຫ້ເຂົາແຕ່ລະຄົນຄິດເຖິງວິທີທາງທີ່ເຂົາແຕ່ລະຄົນຈະໃຊ້ຄວາມສາມາດທີ່ພະເຈົ້າໃຫ້ເຂົາເພື່ອຖະຫວາຍກຽດແກ່ພະເຈົ້າ.
4. ໃຫ້ເຂົາອະທິບາຍເລື່ອງການຖະຫວາຍສ່ວນສິບໃນພະຄຳພີເດີມແລະໃນພະຄຳພີໃໝ່.
5. ການເປັນຂ້ອຍໃຊ້ຂອງພະເຈົ້າຢ່າງສັດຊື່ຈະປາກົດອອກມາຢ່າງໃດ?
6. ເນື້ອຄວາມໃນຄຳອຸປະມາເລື່ອງຝູງແກະແລະຝູງແບ້ສອນວ່າຢ່າງໃດ? ແກະປຽບທຽບກັບໃຜ? ແບ້ເດ? ໃຜຈະເປັນຜູ້ພິ ພາກສາ? ໃຜຈະເປັນຜູ້ທີ່ຖືກການພິພາກສາ?
7. ການປະຕິບັດທີ່ດີເປັນຫຼັກຖານຂອງຄວາມເຊື່ອ. ມີຜູ້ໃດທີ່ເຮັດຄືປະຕິບັດດີເພື່ອຫາປະໂຫຍດສ່ວນຕົວບໍ່. ໃຫ້ເຂົາຍົກຕົວ ຢ່າງບາງປະການທີ່ມີຄົນເຮັດສິ່ງທີ່ດີເພື່ອໄດ້ປະໂຫຍດສ່ວນຕົວ. ຖ້າເຮັດຢ່າງນັ້ນສຸດທ້າຍຈະມີຜົນຮັບເປັນຢ່າງໃດ?
8. ໃຫ້ທ່ານຍົກຕົວຢ່າງການປະຕິບັດຢ່າງຖືກຕ້ອງ. ທີ່ປະຕິບັດໂດຍເຮັດດີນັ້ນເປັນສິ່ງທີ່ເໝາະສົມບໍ່? ເຮົາຈະໄດ້ລອດໂດຍ ການກະທຳດີບໍ່? (ບໍ່ໄດ້) ແມ່ນໂດຍສາເຫດໃດທີ່ຄຼິດສະຕຽນຈະກະທຳສິ່ງທີ່ດີ? ໃຫ້ເຂົາຍົກຕົວຢ່າງຄົນທີ່ກະທຳການດີເພື່ອສຸດທ້າຍຈະໄດ້ປະໂຫຍດສ່ວນຕົວ. ທີ່ຈະກະທຳສິ່ງທີ່ດີເພື່ອ ຈະໄດ້ປະໂຫຍດສ່ວນຕົວມີຜົນຮັບຢ່າງໃດ?
9. ຖ້າເຂົາເຫັນຄົນທຸກຍາກຢ່າງໜຶ່ງຢ່າງໃດ ເຂົາຈະຊ່ວຍໂດຍກົງຢ່າງໃດ?ຈະຊ່ວຍດ້ານການສຶກສາຢ່າງໃດ?
10. ໃຫ້ເຂົາແລກປ່ຽນຄວາມຄິດເຫັນຈາກ 15.42.

# ການປະຊຸມເທື່ອທີ 7

<u>ໃນການປະຊຸມ</u>

1. ທີ່ມາລີອາຖອກນ້ຳມັນຫອມໃສ່ຕີນຂອງພະເຍຊູໃນບ້ານເບດທາເນຍເປັນການເໝາະສົມຫຼືເປັນການເສຍດາຍ? ເປັນຫຍັງເພິ່ນຈຶ່ງໃສ່ນ້ຳມັນທີ່ມີລາຄາສູງປານນັ້ນ? ພວກເຮົາຈະສະແດງຄວາມຮັກຕໍ່ພະເຈົ້າຢ່າງໃດ? ຄວນຖະຫວາຍໂດຍມີສາເຫດໃດ?
2. ໃຫ້ເຂົາແລກປ່ຽນຄວາມຄິດເຫັນກ່ຽວກັບ 16.23 ແລະ 16.25 ຂ.
3. ໃຫ້ທ່ານຈົດກົດເກນໃນການຮັກສາບັນຊີໃນຄຼິດສະຕະຈັກທັງ5 ປະການໃສ່ໄວ້ໃນກະດານດຳ ຫຼືໃສ່ເຈ້ຍໃຫຍ່ກໍໄດ້. ບັນລະ ຍາຍກົດເກນແຕ່ລະປະການ. ໃຫ້ເຂົາຍົກຕົວຢ່າງຈາກພະຄຳພີ ຄຼິດສະຕະຈັກຂອງເຂົາເຮັດຕາມແບບນັ້ນບໍ່? ຖ້າຈະປ່ຽນການບັນຊີໃນຄຼິດສະຕະຈັກຂອງເຂົາສົມຄວນຈະປ່ຽນຢ່າງໃດ? (ໃຫ້ເຂົາເອງປະເມີນຜົນ)
4. ໃຫ້ເຂົາຝຶກການບັນຊີໂດຍແກ້ງເຮັດຄືເປັນນາຍຄັງໃນຄຼິດສະຕະຈັກໂດຍການຈົດລາຍໄດ້ ລາຍຈ່າຍໂດຍການບັນຊີລາຍ ເຊັ່ນ ໆລໆ.

5. ໃຫ້ເຂົາແລກປ່ຽນຄວາມຄິດເຫັນກັນແລະກັນກ່ຽວກັບທີ່ພະເຢຊູບອກວ່າ "ນີ້ແຫຼະ ຄືກາຍຂອງເຮົາ" ແລະ "ນີ້ແຫຼະ ຄືເລືອດ ຂອງເຮົາ". ມີຄວາມໝາຍວ່າຢ່າງໃດ?

6. ເປໂຕຫຼົງຜິດໃນ 3 ດ້ານກ່ອນທີ່ປະຕິເສດພະອົງ, ໃຫ້ເຂົາບອກ 3 ດ້ານນັ້ນ (17.40). ຄົນຄຣິດສະຕຽນເຮົາໃນສະໄໝນີ້ ອາດຈະຫຼົງຜິດຢ່າງດຽວກັນບໍ່? ຄວນເຮັດຢ່າງໃດຈຶ່ງຈະຫຼີກເວັ້ນຈາກຄວາມຜິດຢ່າງນັ້ນໄດ້.

7. ເຮົາຄວນຕຽມຕົວຮັບສິນມະຫາສະ ນິດຢ່າງໃດ? ເຮົາຈະຮັບໂດຍມີທ່າທີຢ່າງໃດ? ມີເທື່ອໃດທີ່ເຮົາບໍ່ຄວນຮັບບໍ່?

8. ໃຫ້ເຂົາຍົກຕົວຢ່າງຄົນທີ່ມັກເນັ້ນແຕ່ພະບັນຍັດ. ເທື່ອໃດທີ່ເຮົາຈະຮັບສິນມະຫາສະນິດເຮົາຄວນຄິດເຖິງແຕ່ພະບັນຍັດຫຼື ຄວນຄິດເຖິງແຕ່ການຖິ້ມໃຈເກົ່າເອົາໃຈໃໝ່?

---

# ການປະຊຸມເທື່ອທີ 8

<u>ໃນການປະຊຸມ</u>

1. ໃຫ້ກວດບົດເສັງ 19 ແລະ 20 ທັງບົດຝຶກດ້ວຍ.

2. ໃຫ້ເຂົາອ່ານຕອນພະຄຳພີເລື່ອງພະວິນຍານບໍລິສຸດທີ່ເຂົາໝາຍໄວ້ໃນ ໂຢຮັນບົດ 14 ເຖິງ 16 ໂດຍສີຂຽວ. ຕອນພະຄຳພີເຫຼົ່ານັ້ນສອນຢ່າງໃດກ່ຽວກັບພະວິຍານ?

3. ໃຫ້ເຂົາປຶກສາຫາລືກັນກ່ຽວກັບຄຳເທດສະໜາຂອງພະເຢຊູໃນຫ້ອງຊັ້ນເທິງວ່າ ເຫັນຢູ່ໃນ ບົດແລະຂໍ້ໃດ? ສອນເລື່ອງຫຍັງ? ແຍກເປັນສ່ວນໃດແດ່?

4. ໃນ ໂຢຮັນ 13:1-15 ພະເຢຊູເຮັດຫຍັງ? ເຫັນການກະທຳຂອງພະເຢຊູໃນການນັ້ນ ເປັນຕົວຢ່າງຕໍ່ເຮົາຢ່າງໃດ? ຄຣິດສະຕຽນເຮົາຈະຮັບໃຊ້ຄົນອື່ນໄດ້ຢ່າງໃດ?

5. ໃຫ້ເຂົາແລກປ່ຽນຄວາມຄິດເຫັນກັນໃນການຝຶກທ້າຍບົດທີ 19 ໜ້າ 211.

6. ພະເຢຊູຖືກທົດລອງຢ່າງໃດໃນສວນເຄັດເຊມາເນ? ເອົາຊະນະການທົດລອງຢ່າງໃດ? ຈຶ່ງມີຜົນຮັບຢ່າງໃດ? ພວກເຮົາພົບການທົດລອງຢ່າງໃດໃນທຸກວັນນີ້? ເຮົາຈະຊະນະໄດ້ຢ່າງໃດ? ຖ້າຕົກໃນການທົດລອງຄວນເຮັດຢ່າງໃດ? ຖ້າຕົກໄປເລີຍໆຈະມີຜົນຮັບຢ່າງໃດ?

7. ໃນມັດທາຍ 26:48. ເປັນຫຍັງຢູດາຈຶ່ງໝາຍພະເຢຊູໄວ້ໂດຍຄຳຈູບ?

8. ຈິດໃຈ ແລະຄວາມຄິດຈະແຕກຕ່າງກັນຢ່າງໃດ? ພະເຈົ້າສ້າງຄວາມຄິດຂອງມະນຸດຄົນທຳອິດນັ້ນເປັນຢ່າງໃດ? ຫຼັງຈາກຕົກໃນບາບ ຄວາມຄິດຂອງມະນຸດກາຍເປັນຢ່າງໃດ? ຖ້າເຮົາຮັບເຊື່ອໃນພະເຢຊູ ຄວາມຄິດຂອງເຮົາຈະປ່ຽນແປງຢ່າງໃດ? ຖ້າເຮົາຈະເອົາພະເຢຊູມາເປັນຕົວຢ່າງໃນການດຳເນີນຊີວິດຕາມການຊົງນຳຂອງພະເຈົ້າຈະເປັນຢ່າງໃດ? ໃຫ້ເຂົາກ່າວຄຳພະຍານໃນເລື່ອງການຕໍ່ສູ້ການທົດລອງຈາກພະຍາມານ. (ຫຼືອາດຈະມີບາງເວລາທີ່ເຂົາຕົກໃນການທົດລອງກໍມີ)

9. ຖ້າເຮົາຖະຫວາຍຕົວໃຫ້ພະເຈົ້າເຮົາອາດຈະຮັບພະພອນຢ່າງໃດ?

# ການປະຊຸມເທື່ອທີ 9

ໃນການປະຊຸມ

1. ໃຫ້ກວດຄຳຕອບບົດເສັງ 21 ແລະ 22 ທັງບົດຝຶກດ້ວຍ.
2. ໃຫ້ທວນຄືນເຫດການໃນອາທິດສຸດທ້າຍ ຕາມແຕ່ລະວັນ.
3. ເລື່ອງການພິພາກສາດ້ານສາດສະໜາ ເປັນຫຍັງເຂົາຈຶ່ງເອົາພະເຢຊູໄປຢູ່ຕໍ່ໜ້າອັນນາ (ກາປະຟາເປັນມະຫາປະໂລຫິດ). ການພິພາກສາດ້ານສາດສະໜານັ້ນເປັນຢ່າງໃດ? ພວກສະມາຊິກສານຕັດສິນໃຈຢ່າງໃດ? ເປັນຫຍັງເຂົາຕັດສິນຢ່າງນັ້ນ. ໃຫ້ທວນຄືນກ່ຽວກັບການພິພາກສາຂອງຈັກກະພັດໂລມ. ເປັນຫຍັງພະເຢຊູຈຳເປັນຕ້ອງຢູ່ຕໍ່ໜ້າປີລາດດ້ວຍ? ປີລາດບໍ່ຢາກຮັບຜິດຊອບ ເພິ່ນເຮັດຢ່າງໃດເພື່ອຈະແກ້ຕົວກ່ອນ? ຜົນສຸດທ້າຍພະເຢຊູຖືກພິພາກສາສອງເທື່ອ ພະເຢຊູມີທ່າທີໃດຕໍ່ຄົນທີ່ຟ້ອງແລະລົງໂທດ.
4. ເຫັນວ່າເຂົາຟ້ອງໃສ່ພະເຢຊູຫຼາຍປານໃດກໍຕາມ ພະອົງບໍ່ຕອບເຂົາ. ເຮົາຈະເອົາຕົວຢ່າງຂອງພະເຢຊູຢ່າງໃດ ກ່ຽວກັບຜູ້ທີ່ເປັນພະຍານຕົວະຕໍ່ສູ້ເຮົາ? ໃນເວລາໃດທີ່ເຮົາບໍ່ຄວນຕອບ ແລະເວລາໃດທີ່ເຮົາຄວນຕອບ?
5. ເປໂຕຢູ່ໃສແລະເຮັດຫຍັງໃນເມື່ອທີ່ເຂົາພິພາກສາພະອົງ? ຜົນຮັບສຸດທ້າຍ ເປໂຕເປັນຢ່າງໃດ?
6. ໃຫ້ເຂົາພາກັນຊີ້ບອກສະຖານທີ່ຕ່າງ ໆ ໃນຮູບ ໜ້າ 230.
7. ໃຫ້ທີ່ປະຊຸມຮ່ວມມືກັນແຕ່ງໂຄງຮ່າງບົດເທດສະໜາເລື່ອງການສິ້ນພະຊົນ ແລະການວາງພະສົບໃສ່ອຸບໂມງ. (ກັບໄປທວນຄືນເລື່ອງການແຕ່ງບົດເທດໃນຫຼັກສູດທີ 3 ກໍໄດ້.)
8. ໃຫ້ຕອບຄຳຖາມຢູ່ໜ້າປົກ ບົດທີ 22 ໜ້າ 233.
9. ໃຫ້ເຂົາສະເໜີຄຳທຳນວາຍຈາກ ພສສ 22 ທີ່ສຳເລັດໃນ ມັດທາຍ 27. ຖ້າເຂົາເຫັນຄົນທີ່ບໍ່ເຊື່ອໃນພະຄຳພີ ໃຫ້ເຂົາຍົກຄຳທຳນວາຍເຫຼົ່ານັ້ນມາເປັນຫຼັກຖານວ່າ ຄວາມຕາຍຂອງພະເຢຊູບໍ່ແມ່ນອຸປະຕິເຫດແຕ່ເປັນຕາມ ແຜນການຂອງພະເຈົ້າ.
10. ໃຫ້ເຂົາປຶກສາຫາລືກັນກ່ຽວກັບພວກໂຈນທີ່ຖືກຄຶງໄວ້ກັບພະອົງ (ມທ 27:44 ແລະ ລູກາ 23:39-43) ເລື່ອງນີໂກເດມ (ຢຮ 19:39) ທີ່ປ່ຽນສະພາບມາຕັ້ງແຕ່ກ່ອນໃນໂຢຮັນ ບົດທີ 3. ໃນໂຢຮັນ 19:26-27 ພະອົງເປັນຫ່ວງເລື່ອງມາລີອາເຖິງຂະໜາດໃດ?

---

# ການປະຊຸມເທື່ອທີ 10

ໃນການປະຊຸມ

1. ໃຫ້ກວດບົດເສັງ 23, 24 ແລະ 25 ທັງບົດຝຶກດ້ວຍ.
2. ຈຸດປະສົງທີ່ພະເຢຊູຕາຍມີຢູ່ 4 ແງ່ ໃຫ້ເຂົາບອກທັງ 4 ແງ່ ໃຫ້ເຂົາອ່ານຂໍ້ພະຄຳພີດັ່ງຕໍ່ໄປນີ້ ແລ້ວບອກວ່າຂໍ້ ພະຄຳພີນັ້ນຖືກກັບແງ່ໃດ?

   ເອຊາຢາ 53:4-6 — ໂຢຮັນ 1:29

   ຄາລາເຕຍ 4:5 — ເຮັບເລີ 10:10

   1 ໂຢຮັນ 2:2 — 1 ໂຢຮັນ 3:8

   ພະນິມິດ 5:5 ແລະ 9

   ການສິ້ນພະຊົນຂອງພະອົງມີສ່ວນກ່ຽວຂ້ອງກັບຄວາມຊອບທຳ ແລະຄວາມຮັກຂອງພະອົງຢ່າງໃດ? 1 ເປໂຕ ບອກສອນຫຍັງຊ້ຳອີກກ່ຽວກັບການສິ້ນພະຊົນ.
3. ການທີ່ຄົນໃນໂລກເປັນທາດຂອງຄວາມບາບໝາຍຄວາມວ່າຢ່າງໃດ? ໃຫ້ເຂົາຍົກຕົວຢ່າງສະເພາະທີ່ສະແດງວ່າມະນຸດ ເຮົາເປັນທາດຂອງບາບ. ໃຫ້ຍົກຕົວຢ່າງທີ່ເຮົາຍອມເປັນທາດຂອງພະເຢຊູໂດຍຄວາມຮັກ.
4. ໃຫ້ເຂົາປຽບທຽບ ເອຊາຢາ ບົດ 53 ກັບ ກິດຈະການ 8:32-35 ແລະ 1 ເປໂຕ 2:22-25
5. ໃຫ້ເຂົາບັນລະຍາຍລະບົບການບູຊາໃນພະຄຳພີເດີມແລະຄວາມໝາຍຕ່າງໆ ໃນລະບົບນັ້ນ. ໃຫ້ຍົກເຮັບເລີ ບົດທີ 9 ແລະ 10 ເພື່ອສະແດງວ່າພະເຢຊູເປັນເຄື່ອງບູຊາອັນສຸດທ້າຍ.
6. ແມ່ນເພາະເຫດໃດທີ່ພະເຢຊູຕ້ອງຖືກໂທດບາບຂອງເຮົາ.ຖ້າມະນຸດເຮົາຈະຄືນດີກັບພະເຈົ້າມີເງື່ອນໄຂໃດແດ່?
7. ໃຫ້ເຂົາປຶກສາກັນເລື່ອງຄຳຖາມໃນສຸດທ້າຍຂອງບົດທີ 24 (ບົດຝຶກ)
8. ໃຫ້ເຂົາບອກສາເຫດທີ່ເຮົາຄວນຮູ້ຈັກປຽບທຽບເລື່ອງຊີວິດຂອງພະເຢຊູຕາມການບັນທຶກຂອງຂ່າວປະເສີດທັງ 4 ເຫຼັ້ມ.ໃຫ້ ທ່ານຈົ່ງແນໃສ່ວ່າເຂົາເຂົ້າໃຈວິທີໃຊ້ “ຕາຕະລາງສະຫລູບເລື່ອງຊີວິດຂອງພະເຢຊູ” ກ່ອນ ບົດ ທີ 25.

---

# ການປະຊຸມທວນຄືນ

<u>ຈົ່ງສັງເກດ</u>: ມາເຖິງປະຊຸມນີ້ທ່ານອາດຈະເລືອກໄດ້ວ່າຈະຕຽມປະຊຸມນີ້ໄວ້ສະເພາະເພື່ອການທວນຄືນທັງໝົດຫຼັກສູດ ນັດຫາຍເຫຼັ້ມທີ 5 ນີ້ບໍ່? ຫຼື ຈະຈັດໃຫ້ມີການເສັງສຸດທ້າຍທັນທີ ແລ້ວແຕ່ທ່ານຈະເລືອກ. ພວກຜູ້ມາຮຽນພ້ອມຈະເສັງບໍ່ ຫຼືຕ້ອງການຮຽນຄືນອີກ?

ຖ້າຈະທວນຄືນມີຫຼາຍວິທີທາງທີ່ຈະເລືອກໄດ້ຄື:

1. ໃຫ້ເອົາເປົ້າໝາຍໃນແຕ່ລະໝວດມາເປັນພື້ນຖານ.
2. ໃຫ້ເອົາຄຳຖາມໃນບົດເສັງແຕ່ລະບົດມາຖາມເຂົາ.
3. ເອົາຄຳຖາມໃນເປົ້າໝາຍ ເອົາແຕ່ບົດທີ່ຮູ້ສຶກວ່າອ່ອນໃຫ້ເຂົາຕອບຈາກບົດເສັງ.

ທ່ານຈົ່ງບອກໃຫ້ເຂົາເຂົ້າໃຈວ່າ ບົດເສັງສຸດທ້າຍນັ້ນຈະຂຶ້ນຢູ່ກັບເປົ້າໝາຍໃນແຕ່ລະໝວດເປັນຕົ້ນ.